# ພົງສາວະດານ ເຈົ້າອະນຸວົງສ໌ ວຽງຈັນ



# ພົງສາວະດານ ເຈົ້າອະນຸວົງສ໌ ວຽງຈັນ

## ຕອນ

## ຕີນະຄອນ ຣາຊສີມາ

(ຕົ້ນສະບັບໃບລານ ພາສາລາວ)


ຮີບໂຮມແລະລຽບລຽງ
ໂດຍ

ວິລຽມ ພຣະໄຊຍະວົງສ໌


1995

໑ ພົງສາວະດານ ເຈົ້າອະນຸວຽງຈັນ

ພົງສາວະດານ ເຈົ້າອະນຸວຽງຈັນ
ຕອນຕີ ນະຄອນຣາຊສີມາ
(ຕົ້ນສະບັບໃບລານ ພາສາລາວ)

ຮິບໂຮມ ແລະ ລຽບລຽງ ໂດຍ
ວິລຽມ ພຣະໄຊຍະວົງສ໌

ພິມຄອມພິວເຕີ ໂດຍ
ມໍຣະດົກລາວການພິມ

ຈັດພິມ ໂດຍ
ມໍຣະດົກລາວການພິມ

ກວດກາ ໂດຍ
ນ.ສາຄອນ ພຣະໄຊຍະວົງສ໌

ທີ່ປຶກສາ ແລະ ແຕ້ມໜ້າປົກ
ທ.ສີຈັນ ຈິດດຳຣົງ

ພິມຄັ້ງທີ່ ນຶ່ງ
100 ຫົວ

ສງວນລິຂສິທ

ໜ້າປົກ: ສະແດງເຖິງເວລາທີ່ເຈົ້າຣາຊວົງເຫງົ້າ ເລວດາບກັບ ເຈົ້າພຣະຍາຣາຊສຸພາວະດີ (ພຣະຍາບໍດິນເດຊາ) ຢູ່ບ້ານບົກຫວານ (ຈັງຫວັດໜອງຄາຍ) ໃນວັນເສົາ ວັນທີ 18 ຕຸລາຄົມ (10) 1928. ເບິ່ງພຣະຣາຊປວັດພຣະເຈົ້າອະນຸວົງສ໌ ໜ້າ ຂ.

# ພົງສາວະດານເຈົ້າອະນຸວົງສ໌ວຽງຈັນ
# ຕອນຕີ ນະຄອນຣາຊສີມາ

## ສາຣະບານ


| | | |
|---|---|---|
| 1. | ຄຳນຳຂອງຜູ້ຮິບໂຮມ ແລະ ລຽບລຽງ | ໜ້າ ກ-ງ |
| 2. | ພຣະຣາຊປະວັດເຈົ້າອະນຸວົງສ໌ | ຈ-ດ |
| 3. | ວັນທີທີ່ສຳຄັນ ແລະຊື່ບຸກຄົນໃນພົງສາວະດານ | ຕ-ປ |
| 4. | ກ່າວເຖິງເມືອງວຽງຈັນ | 1-3 |
| 5. | ຍົກກະບັດເສນາອາມາດເຈົ້າກຸງບາງກອກໄປເກັ້ຍກ່ອມ ລາວ ຂເມນ ຂ້າ | 4-8 |
| 6. | ພຣະຍາພິມພັກດີ ຍົກທັບໄປຕີເມືອງຣະແດ | 8-11 |
| 7 | ພຣະສາເກດໂງ້ງເຜົາເມືອງຈຳປາສັກ | 11-18 |
| 8. | ເຈົ້າອະນຸວົງສ໌ ຈັບພຣະສາເກດໂງ້ງ | 18-23 |
| 9. | ເຈົ້າກຸງສຣີບາງກອກ ສົ່ງກອງສັກອອກສັກເລກໝາຍ | 24-26 |
| 10. | ພຣະຍາພິມພັກດີ ຂຶ້ນຄອງເມືອງນະຄອນຣາຊສີມາ<br>ມາບຊູ່ເມືອງຊູຂັນ ແລະ ຈຳປາສັກ | 27-30 |
| 11. | ພຣະຍາພິມພັກດີ ວາງແຜນຄອງຈຳປາສັກ | 31-32 |
| 12. | ເຈົ້າອະນຸວົງສ໌ ຍົກທັບຕີນະຄອນຣາຊສີມາ | 32-38 |
| 13. | ພຣະຍາໄກຼ ຮັບອາສາເຈົ້າອະນຸວົງສ໌ ນຳຈັບພຣະຍາພິມພັກດີ | 39 |
| 14. | ພຣະຍາພິມພັກດີ ປອມຕົວເຂົ້າວາງແຜນແກ້ໄຂສະຖານະການ | 39-41 |
| 15. | ເຈົ້າອະນຸວົງສ໌ ສັ່ງກວາດຕ້ອນຊາວລາວ ກັບວຽງຈັນ | 42-43 |
| 16. | ພຣະຍາໄກຼ ນຳຈັບພຣະຍາພິມພັກດີ | 47 |
| 17. | ເຈົ້າຄອງນະຄອນຈຳປາສັກ ຍົກທັບໄປສົມທົບເຈົ້າອະນຸ | 47-50 |
| 18. | ເຈົ້ານະຄອນຈຳປາສັກ ກວາດຕ້ອນຄົວລາວກັບຄືນວຽງຈັນ ຄັ້ງຍິ່ງໃຫຍ່ | 51-60 |
| 19. | ພຣະຍາໄກຼ ກັບມາກາບທູນເຈົ້າອະນຸວົງສ໌ ກ່ຽວກັບການນຳຈັບພຣະຍາພິມພັກດີ | 60-61 |
| 20. | ວັງໜ້າຍົກທັບມາສົມທົບເຈົ້າອະນຸວົງສ໌ | 62-63 |
| 21. | ຄອບຄົວໄທຍ໌ ຈັບອາວຸດຂຶ້ນສູ້ລາວ | 63-67 |
| 22. | ເຈົ້າອະນຸວົງສ໌ ຖອຍທັບ | 67-70 |

23. ໝື່ນພັກດີ ນຳເລື້ອງການທູນເຈົ້າກຸງບາງກອກ 70
24. ສີ່ພຣະຍາ ໄປເລວເສີກ 71-74
25. ເຈົ້າອະນຸວົງສ໌ ສເດັດໜີຈາກວຽງຈັນ 74-78
26. ພຣະຍາພົມພັກດີ ຕາມຕີເຈົ້ານະຄອນຈຳປາສັກ 79
27. ເຈົ້າອະນຸວົງສ໌ ສເດັດໜີໄປເພິ່ງ ເຈົ້າກຸງອານາມ 80-84
28. ທະຫານໄທຍ໌ ຍ້ານທະຫານແກວ 84-90
29. ເຈົ້າອະນຸວົງສ໌ ກັບຄືນມາວຽງຈັນ ສູ້ຮົບກັບໄທຍ໌ອີກ 91-96
30. ເຈົ້າອະນຸວົງສ໌ ໄປເພິ່ງເຈົ້ານ້ອຍເມືອງພວນ 96-97
31. ຊານົນ ແມ່ທັບລາວ ປາບເສີກ 97-101
32. ເຈົ້າອະນຸວົງສ໌ ຖືກຈັບສົ່ງໄປບາງກອກ 102-103
33. ພຣະຍາມຸນິນເດຊາ ຍົກທັບໄປຕີແກວ 104-105
34. ເຈົ້າອະນຸວົງສ໌ ທີວົງຄົດ 105-106
35. ລາວຕໍ່ສູ້ ກັບແກວ 106-111
36. ໄທຍ໌ຍົກພົນ ຂ້າມນ້ຳຂອງ ມາຕີລາວ ແລະ ແກວ 111-113
37. ໄທຍ໌ກວາດ ລາວຂ້າມນ້ຳຂອງ ໄປເມືອງນະຄອນ 113-132
38. ໄທຍ໌ຕີ ເມືອງຊຸມພອນ 132-135
39. ແກວຍົກທັບ ຕີໄທຍ໌ແຕກ 136-146
40. ແກວຂ້າ ເຈົ້ານ້ອຍເມືອງພວນ 146-148
41. ໄທຍ໌ຕີ ເມືອງພວນ 149-159
42. ເຈົ້າຈຸລນີ ຂຶ້ນຄອງເມືອງນະຄອນ 159-164
43. ເຈົ້າຈຸລນີ ສິ້ນພຣະຊົນ 164-172
44. ວັງໜ້າ ເຈົ້າເມືອງສະກົນນະຄອນ ໄປຕີເມືອງຄຳເກີດ 172-174
45. ເຈົ້າເມືອງຊຸມພອນ ຂຶ້ນຄອງເມືອງ 175-176
46. ພຣະພຸທຮູບລາວ ທີ່ໄທຍ໌ສຍາມເອົາໄປໃນລະຍະ ທີ່ລາວເປັນເມືອງສ່ວຍ 177-178
47. ຄຳກອນກ່ຽວເຖິງເຂດນ້ຳແດນດິນຂອງລາວ ແລະລວດລາຍເກົ່າແກ່ຂອງລາວ 179-180
48. ແປຄຳສັບ 181-187
49. ເອກສານປະກອບໃນການຄົ້ນຄວ້າ 188-189

# ຄຳນຳຂອງຜູ້ຣິບໂຣມ

ພຶງສາວະດານເຈົ້າອະນຸວຽງຈັນສບັບນີ້ ມີຕົ້ນສບັບເປັນໜັງສືໃບລານ, ເປັນພາສາລາວ ມີ 99 ໃບລານ 198 ໜ້າ ຈົບເລື້ອງພໍດີ, ຂຽນເປັນກອນອ່ານຮຽກວ່າ *ອັກສອນສັງວາສ.* ໃນສມັຍວຽງຈັນເປັນເມືອງສ່ວຍຂອງໄທຍ໌ສຍາມ (1779-1893) ໄທຍ໌ໄດ້ຈູດເຜົາເມືອງວຽງຈັນໃນປີ 1778 ແລະ ປີ 1828 ແລ້ວໄດ້ກວາດເອົາວັນນະຄະດີຂອງລາວທີ່ເປັນໃບລານຈຳນວນຫລວງຫລາຍ ຈາກເມືອງວຽງຈັນໄປໄວ້ຢູ່ຫໍສມຸດແຫ່ງຊາດໄທຍ໌ທີ່ບາງກອກ ຈົນເຖິງເທົ່າທຸກວັນນີ້ ( ມີຫ້ອງພິເສດຊຶ່ງພຣະສົງລາວບາງອົງໄປສຶກສາຢູ່ປະເທດໄທຍ໌ ໄດ້ມີໂອກາດເຂົ້າໄປພົບເຫັນ ແລະ ຄົ້ນຄວ້າຢູ່ໃນຫ້ອງພິເສດນັ້ນ ). ຕໍ່ມາໃນປີ 1930 ຈຶ່ງໄດ້ມີຜູ້ຂຽນລອກພຶງສາວະດານສບັບນີ້ ຈາກຕົ້ນສບັບໃບລານ ທີ່ເປັນພາສາລາວ ມາເປັນອັກສອນໄທຍ໌ ປັດຈຸບັນ.

ພຶງສາວະດານວຽງຈັນສບັບນີ້ ບໍ່ປາກົດມີຊື່ຜູ້ແຕ່ງ. ຜູ້ຣິຈນາຕົ້ນສບັບຄື <u>ທ່ານສັງວານຣາສີ</u> ສັນນິຖານວ່າຜູ້ປະພັນກອນອັກສອນສັງວາສນີ້ ຄົງເປັນພິກຂຸ ເພາະວ່າໃນເລື້ອງມີຄະຕິທັມສອນໃຈຢູ່ຫລາຍບ່ອນ ແລະການແຕ່ງປະພັນ ກໍແມ່ນຫລັງຈາກທີ່ການກອບກູ້ເອກຣາດຈາກໄທຍ໌ສຍາມ ຂອງພຣະເຈົ້າອະນຸວົງ ໄດ້ສິ້ນສຸດລົງໃນປີ 1828 ( ມາເຖິງທຸກວັນນີ້ເປັນເວລາ 167 ປີ ).

ປີ 1986 ໃນເວລາທີ່ຂ້າພະເຈົ້າເປັນອົພຍົບຢູ່ປະເທດໄທຍ໌ ໄດ້ມີໂອກາດພົບພໍ້ເປັນຄັ້ງທຳອິດ ມໍຣະດົກອັນລ້ຳຄ່າມະຫາສານຂອງລາວເຮົາ <u>ທີ່ເປັນກຸນແຈຄຳ</u> ໄຂໃຫ້ ນັກປວັດສາດ ນັກຄົ້ນຄວ້າ ນັກຮຽນຮູ້ ເຫັນໄດ້ຄວາມເປັນຈິງຂອງຄວາມທຸກທໍຣະມານ ເຈັບແສບແຄ້ນໃຈ ຂອງຊາວລາວ ຫາສິ່ງປຽບບໍ່ໄດ້ເລີຍ ໃນລະຍະທີ່ເປັນເມືອງສ່ວຍຂອງໄທຍ໌ສຍາມ ອັນເປັນຕົ້ນເຫດ ໃຫ້ພຣະເຈົ້າອະນຸວົງສ໌ແຫ່ງວຽງຈັນ ວີຣະກະສັດ ນັກຣົບທີ່ເກັ່ງກ້າສາມາດ ໄດ້ວາງແຜນກອບກູ້ເອົາ ອິສຣະພາບ ແລະ ເອກຣາດ ຈາກການກົດຂີ່ຂົ່ມເຫງ ຈາກການເປັນທາສຂອງໄທຍ໌ສຍາມ ແຕ່ການກອບກູ້ເອົາເອກຣາດນັ້ນ ບໍ່ສຳເລັດ ຍ້ອນວ່າພາຍໃນລາວເວລານັ້ນ ຍັງຂາດຄວາມເປັນນ້ຳນຶ່ງໃຈດຽວກັນ.

ເມື່ອອ່ານແຕ່ລະບັ້ນແຕ່ລະຕອນ ຂອງພຶງສາວະດານເມືອງວຽງຈັນສບັບນີ້ ທ່ານຈະເຫັນໄດ້ວ່າ ເປັນເອກສານຄົ້ນຄວ້າ ຢ່າງຮອບດ້ານ.

<u>ທາງດ້ານອັກສອນສາດ</u> ກໍເປັນກາບກອນອ່ານ ແບບອັກສອນສັງວາສ ເມື່ອອ່ານແລ້ວ ຜູ້ອ່ານມີຄວາມຮູ້ສຶກອອນຊອນ ມີການສຳຜັດອັກສອນ ອ່ານໄປແລ້ວເພີດເພີນຈິດໃຈຄືກັນກັບວ່າ ເຮົາຜູ້ອ່ານ ກໍເດີນໄປຕາມເລື້ອງ.

ຂ ພົງສາວະດານ ເຈົ້າອະນຸວຽງຈັນ

<u>ໃນດ້ານຍຸທສາດ</u> ທາງຝ່າຍໄທຍ໌ສຍາມຄື ຍົກກະບັດ ຫລື ພຣະຍາພິມພັກດີ ເຈົ້າເມືອງນະຄອນຣາຊສີມາ ກໍໄດ້ໃຊ້ທຸກກົນອຸບາຍເລັ່ຫລ່ຽມ ຫລອກລວງຂູດຣີດເຖືອໜັງ ພວກຂເມນ ຂ້າ ແລະ ປະຊາຊົນລາວໃນທົ່ວເມືອງພາກອີສານ ເພື່ອເຮືອງອຳນາດ ຮິບໂຮມເອົາເງິນຄຳ ນໍ ງາຊ້າງ ໄວ້ເປັນສົມບັດຂອງຕົນ ແລ້ວຍັງນຳເອົາໄປຖວາຍແກ່ເຈົ້າກຸງບາງກອກ ອີກດ້ວຍ. ທາງເຈົ້າກຸງບາງກອກ ກໍຍັງໄດ້ເລື່ອນຊັ້ນຍົກກະບັດ ວ່າເປັນຜູ່ສລາດເກັ່ງກ້າອີກ ທັ້ງໆທີ່ຍົກກະບັດໄດ້ໄປສ້າງຄວາມປັ່ນປ່ວນຢູ່ໃນທົ່ວເມືອງລາວ. ຍົກກະບັດໄດ້ເປັນຜູ່ວາງແຜນ ເຜົາເມືອງຈຳປາສັກ ແລະ ເມືອງຊູຂັນ.

ສ່ວນພຣະເຈົ້າອະນຸວົງສ໌ ວິຣະກະສັດລາວ ແລະຣາຊໂອຣົດຄື : ເຈົ້າສຸດທິສານ (ເຈົ້າໂປ້) ເຈົ້າຣາຊບຸດໂຍ້ (ເຈົ້າຄອງນະຄອນຈຳປາສັກ-1822) ເຈົ້າຣາຊວົງ ຫລືເຈົ້າເຫງົ້າ ພ້ອມດ້ວຍແມ່ທັບລາວ ກໍໄດ້ລະດົມກຳລັງ ຕໍ່ສູ້ໄທຍ໌ສຍາມ ດ້ວຍຄວາມຄຽດແຄ້ນແໜ້ນໃຈ ຕໍ່ສູ້ຢ່າງບໍ່ລົດລະ ຕໍ່ສູ້ກັບທະຫານໄທຍ໌ ຫລາຍຫລັບຫລາຍຕ່າວ ດັ່ງຄຳກອນຂອງພົງສາວະດານສະບັບນີ້ ໄດ້ກ່າວໄວ້ດັ່ງລຸ່ມນີ້:

| | | | | |
|---|---|---|---|---|
| ... | ໂອນໍບັດນີ້ | ມາໂກຫ້ອງ | ໂສໂກຍິນໂສກ | |
| | ຄຽດທໍ່ | ໄທຍ໌ຂີ້ຮ້າຍ | ທຳສົ້ມແກ່ໃຈ | |
| | ກູຊິ | ທຳມຸ່ນມ້າງ | ເມືອງແຫ່ງມັນເສັຍ | ບໍ່ຢ່າແລ້ວ |
| | | ເອົາຄົວມັນ | ກວາດມາເປັນຂ້ອຍ | |
| | ກູຊິ | ທຳໃຫ້ແລ້ວ | ສົມດັ່ງຄຳຄຶດ ... | |
| | | | ( ໜ້າ 35 ບັນທັດທີ 22 ) | |

| | | | | |
|---|---|---|---|---|
| ... | ຄຽດທີ່ | ໄທຍ໌ຂີ້ຮ້າຍ | ເມືອງຂວ້ຳມຸ່ນທະລາຍ | ແທ້ແລ້ວ |
| | | ຈັກຜູກປິ້ງ | ຕີຂ້າແມ່ນໃຈ | ແທ້ແລ້ວ |
| | ຄຽດທີ່ | ມັນເຜມ້າງ | ປອງຈູດເມືອງເສັຍ | ດັ່ງນັ້ນ |
| | ບັດນີ້ | ວວນນຳທັນ | ຄອບມັນລາງແລ້ວ ... | |
| | | | ( ໜ້າ 36 ບັນທັດທີ 23 ) | |

ຫລັງຈາກພຣະເຈົ້າອະນຸວົງສ໌ໄດ້ຫລົບໜີ ໄປເພິ່ງພຣະເຈົ້າແຫ່ງອານາມແລ້ວ (ປະເທດວຽດນາມໃນປັດຈຸບັນ) ຄືພຣະເຈົ້າຈັກກະພັດ ມິນມັງ **Minh Mang (1820-1840)** ໃນຕໍ່ມາ ໃນວັນທີ 02/08/1828 ພຣະເຈົ້າອະນຸວົງສ໌ ກໍຍັງໄດ້ເອົາກຳລັງ ກັບຄືນເຂົ້າໄປໃນໂຕເມືອງວຽງຈັນອີກ ເພື່ອຫລອນຕີ ແລະດັບສູນກອງທະຫານຂອງພຣະຍາຣາຊສຸພາວະດີ ຢູ່ໃນບໍຣິເວນວັດແສນ ຊຶ່ງແມ່ນວັດສີສະເກດໃນປັດຈຸບັນ ກ່ອນທີ່ພຣະເຈົ້າອະນຸວົງສ໌ ຈະໄປລີ້ໄພຢູ່ຊຽງຂວາງ ແລະຖືກເຈົ້ານ້ອຍເມືອງພວນຈັບສົ່ງໃຫ້ໄທຍ໌ສຍາມ ໃນຕໍ່ມາ.

<u>ທາງດ້ານປວັດສາດ</u> ພົງສາວະດານເມືອງວຽງຈັນສບັບນີ້ ຍັງພັນລະນາເຖິງການສູ້ຣົບ ລະຫວ່າງ ໄທຍ໌ກັບລາວ ໄທຍ໌ກັບແກວ ແລະ ລະຫວ່າງ ແກວກັບລາວ ຢ່າງສລັບຊັບຊ້ອນກັນ. ດັ່ງນັ້ນ ຈຶ່ງເຫັນໄດ້ວ່າ ໃນຍຸກສມັຍນັ້ນ ລາວເຮົາໄດ້ຕໍ່ສູ້ຢ່າງທໍລະຫົດ ເພື່ອເອົາຕົວລອດອອກຈາກແອກ ຈາກການເປັນທາສຂອງຊາດອື່ນ.

<u>ສ່ວນທາງດ້ານພູມີສາດ</u>ແລ້ວ ພົງສາວະດານເມືອງວຽງຈັນສບັບນີ້ ໄດ້ກ່າວເຖິງເຂດນ້ຳແດນດິນ ບ້ານເມືອງຕ່າງໆທີ່ຍັງມີຢູ່ເກືອບໝົດທຸກບ່ອນ ໃນແຜ່ນດິນຂອງລາວ ແລະຂອງໄທຍ໌ໃນທຸກວັນນີ້.( ກະຣຸນາເບິ່ງແຜນທີ່ ໜ້າ 44-46 ແລະ ບົດກອນປະກອບ ໜ້າ 179 ).

ຂ້າພະເຈົ້າໄດ້ອຸດສາພະຍາຍາມ ກ່າຍພົງສາວະດານເຈົ້າອະນຸວຽງຈັນສະບັບນີ້ ຈາກສບັບອັກສອນໄທຍ໌ ຂອງທ່ານສັງວານຣາສີ ມາເປັນພາສາລາວ ໂດຍບໍ່ໄດ້ມີການແຕະຕ້ອງ ຕໍ່ເນື້ອໃນຂອງເອກສານ ແຕ່ປະການໃດ ພໍພຽງແຕ່ ຂຽນແປງໃຫ້ເປັນຄວາມລາວແທ້. ທ່ານສັງວານຣາສີ ກໍໄດ້ກ່າຍຈາກພາສາລາວເດີມ ມາເປັນອັກສອນໄທຍ໌ປັດຈຸບັນ ດີສົມຄວນ ແຕ່ກໍຍັງມີຫລາຍຄຳໄດ້ເດົາເອົາໂດຍບໍ່ມີຄວາມໝາຍ ຍ້ອນວ່າພາສາລາວທີ່ຂຽນເປັນຄຳວິໄສ ສ່ວນມາກເອົາສຳນຽງຊາວເມືອງ 12 ປັນນາ, ໃຊ້ສຳນວນ ແລະ ພາສາລາວ ເດີມ, ຂຽນບໍ່ມີວັນນະຍຸດ ເພາະວ່າອັກສອນປາລີຂຽນເປັນຄຳວິໄສ ຈະບໍ່ໃຊ້ໄມ້ເອກ ແລະໄມ້ໂທ. ຄວາມເກົ່າແກ່ກໍບໍ່ມີຢູ່ໃນວັຈນານຸກົມສມັຍປັດຈຸບັນ.

ໃນການຄົ້ນຄວ້າລຽບລຽງຄັ້ງນີ້ ຂ້າພະເຈົ້າໄດ້ອາໄສວັຈນານຸກົມ ຂອງກະຊວງສຶກສາທິການ ແຫ່ງພຣະຣາຊອານາຈັກລາວປີ 1960 ພ້ອມດ້ວຍໄດ້ມີການປຶກສາຫາລື ກັບທ່ານຜູ້ທີ່ມີຄຸນວຸດທິທາງດ້ານ ອັກສອນສາດ. ພ້ອມດຽວກັນນີ້ ຂ້າພະເຈົ້າກໍໄດ້ເອົາພົງສາວະດານລາວ ລຽບລຽງໂດຍ ອາຈານມະຫາສີລາ ວີຣະວົງສ໌ ສບັບວິທຍາລັຍແບບປະສົມຟ້າງູ່ມ ກະຊວງສຶກສາທິການແຫ່ງພຣະຣາຊອານາຈັກລາວ 1973 ມາເປັນບ່ອນອີງສົມທຽບ. ນອກຈາກນັ້ນ ຂ້າພະເຈົ້າຍັງໄດ້ເອົາບົດຂຽນທີ່ສຳຄັນບາງສບັບ ມາເປັນອັນອ້າງອີງອີກ ເຊັ່ນ:

1. ເຈົ້າອະນຸ ພຣະເຈົ້າແຜ່ນດິນວຽງຈັນ ອີງຕາມເອກສານຂອງວຽດນາມ
   Chao Anou ROI DE VIENTIANE
   A travers les documents Vietnamiens par BUI QUANG TUNG
2. ສຍາມ ໃນຣັຊການຂອງ ຣາມາ ທີສາມ
   SIAM UNDER RAMA III 1824 -1851 by WALTER F.VELLA
3. ສຍາມ ແລະ ລາວ
   SIAM AND LAOS, 1767-1827 by David K.Wyatt
4. ເຈົ້າອະນຸ 1767-1829
   ປະຊາຊົນລາວ ແລະ ອາຊີອາຄະເນ (ເລື່ອງເກົ່າ, ບັນຫາໃໝ່)
   ໂດຍ ດຣ.ມະຍຸຣີ ແລະ ດຣ.ເພີຍພັນ ເຫງົ້າສີວັທນ໌

1829
1767
062

ງ ພົງສາວະດານ ເຈົ້າອະນຸວຽງຈັນ

ຂ້າພະເຈົ້າຍັງໄດ້ຄົ້ນຄວ້າຂຽນຊີວະປະວັດຫຍໍ້ຂອງພຣະເຈົ້າອະນຸວົງສ໌ ເຂົ້າຕື່ມອີກ. ດັ່ງນັ້ນ ແນ່ນອນ ພົງສາວະດານ ເຈົ້າອະນຸວຽງຈັນຕີນະຄອນຣາຊສີມາສບັບນີ້ ຍັງບໍ່ທັນສົມບູນແບບ ແລະ ຄົບຖ້ວນໄດ້ຕາມຄວາມຕັ້ງໃຈ ຫລື ຫາກມີການຂາດຕົກບົກພ່ອງປະການໃດ ຂ້າພະເຈົ້າຂໍນ້ອມຮັບຄວາມປາຖນາດີ ແລະ ຄວາມຮັກຊາດແພງເຊື້ອ ຂອງບັນດາທ່ານຜູ້ຊົງຄຸນວຸດທິຕລອດທ່ານຜູ້ອ່ານ ຜູ້ສົນໃຈຄົ້ນຄວ້າ ຮຽນຮູ້ທຸກຖ້ວນໜ້າໄດ້ໂປຼດກະຣຸນາ ຊີ້ແນະເສີມສ້າງ ແລະ ດັດແປງແກ້ໄຂໃຫ້ບົດຂຽນສບັບນີ້ ໄດ້ກາຍເປັນວັນນະກັມອັນສົມບູນຂອງລາວ ເປັນມໍຣະດົກຕົກທອດແກ່ເຊັ່ນລູກລາວ ເຊັ່ນຫລານລາວ ໄປຕລອດກາລະນານ.

ຂ້າພະເຈົ້າ ຂໍອຸທິດສ່ວນບຸນກຸສົນຜົນງານອັນອະມະຕະນີ້ ໄປຍັງທ່ານຜູ້ແຕ່ງ ວີຣະບຸຣຸດ ນັກປາຊອາຈາຣທີ່ໄດ້ມອບ *ມໍຣະດົກອັນເລີດລ້ຳ ເໝືອນເງິນໂກດເງິນຕື້ນີ້* ໄວ້ໃຫ້ເຊື້ອຊາດລາວ ສືບທອດກັນຕໍ່ໄປ./.

ວິລຽມ ພຣະໄຊຍະວົງສ໌
ຊິດນີ ວັນທີ 6 ກໍຣະກະດາ 2538

24 / VII
ห้ามจำหน่าย

<u>ໝາຍເຫດ:</u> ເພື່ອຊ່ອຍທ່ານຜູ້ອ່ານເຂົ້າໃຈ ສັບເກົ່າແກ່ບູຮານ ສັບປາລີສັນສະກຣິດ ຂ້າພະເຈົ້າໄດ້ແປຄຳສັບຢູ່ໜ້າ 181-186 ຂອງພົງສາວະດານສບັບນີ້ ລຽງຕາມລຳດັບຂອງອັກຂະຣະພາສາລາວ ແຕ່ ກ ເຖິງ ຮ. ຄຳເຫຼົ່ານັ້ນໄດ້ຂີດກ້ອງໄວ້.

# ພຣະຣາຊປະວັດພຣະເຈົ້າອະນຸວົງສ໌

ພຣະເຈົ້າອະນຸວົງສ໌ ປະສູດປີກຸນ ຄ.ສ. 1767 ທີ່ນະຄອນວຽງຈັນ. ຫລັງຈາກລາວລ້ານຊ້າງຕົກໄປເປັນຫົວເມືອງສ່ວຍຂອງໄທຍ໌ສຍາມ ໃນປີ ຄ.ສ. 1779 ພຣະເຈົ້າອະນຸວົງສ໌ ມີອາຍຸໄດ້ 12 ປີ. ພຣະເຈົ້າອະນຸວົງສ໌ ສິ້ນພຣະຊົນເມື່ອ ເດືອນກຸມພາ 1829 ລວມອາຍຸໄດ້ 62 ປີ.

ພຣະເຈົ້າອະນຸວົງສ໌ ເປັນຣາຊໂອຣົດ ອົງທີ 3 ຂອງສົມເດັດພຣະເຈົ້າສິຣິບຸນຍະສານ ( 1730-1781) ຫລື ເຈົ້າອົງບຸນ.

ພຣະເຈົ້າສິຣິບຸນຍະສານ ມີຣາຊໂອຣົດ ແລະຣາຊທິດາ ຄືດັ່ງລຸ່ມນີ້ :

1. ເຈົ້ານັນທະເສນ ຂຶ້ນເປັນພຣະເຈົ້າແຜ່ນດິນວຽງຈັນ 1781 ເຖິງ 1795 ( 14 ປີ )
2. ເຈົ້າອິນທະວົງ ຂຶ້ນເປັນພຣະເຈົ້າແຜ່ນດິນວຽງຈັນ 1795 ເຖິງ 1804 ( 9 ປີ )
3. ເຈົ້າອະນຸວົງສ໌ ຂຶ້ນເປັນພຣະເຈົ້າແຜ່ນດິນວຽງຈັນ 1804 ເຖິງ 1827 ( 23 ປີ )
4. ເຈົ້າພົມມະວົງ
5. ພຣະນາງແກ້ວຍອດຟ້າກັລຍານີ

ເມື່ອເຈົ້າອິນທະວົງສິ້ນພຣະຊົນແລ້ວ ເຈົ້າອະນຸວົງສ໌ກໍໄດ້ຂຶ້ນຄອງຣາຊສົມບັດແທນ ໃນປີ ຄ.ສ. 1804 ນັ້ນເອງ. ສົມເດັດພຣະເຈົ້າອະນຸວົງສ໌ ( ຫລື ໃນສິລາເລກວັດສີສະເກດວຽງຈັນຮຽກວ່າ ສົມເດັດພຣະເຈົ້າໄຊຍະເຊດຖາທິຣາດທີ 3 ). ພຣະອົງເປັນກະສັດຜູ້ກ້າຫານ ເຄີຍໄດ້ເຂົ້າສົງຄາມສູ້ຮົບຂ້າເສິກສັດຕູ ມາຫລາຍຄັ້ງ ຄືເມື່ອພຣະອົງຍັງດຳຣົງຕຳແໜ່ງເປັນອຸປະຣາດນັ້ນ ໄດ້ຍົກກອງທັບຊາວວຽງຈັນ ຈຳນວນ 20.000 ຄົນໄປຮົບພະມ້າທາງເມືອງຊຽງໃໝ່ ໃນປີ ຄ.ສ. 1798 ແລະ ປີ ຄ.ສ. 1799. ໃນປີ ຄ.ສ. 1803 ໄດ້ຍົກກອງທັບໄປຕີເມືອງຊຽງໃໝ່ອີກ ແລ້ວເລີຍໄປຕີເມືອງຊຽງແສນໄດ້. ໃນປີ ຄ.ສ. 1804 ກັບຈາກຣາຊການເມືອງຊຽງໃໝ່ ຈຶ່ງໄດ້ຂຶ້ນຄອງຣາຊສົມບັດເປັນ ພຣະເຈົ້າແຜ່ນດິນວຽງຈັນ.

ເມື່ອພຣະອົງໄດ້ຂຶ້ນຄອງເມືອງແລ້ວ ກໍໄດ້ພະຍາຍາມທຳການຟື້ນຟູປະເທດລາວໃຫ້ຈເຣີນທຸກຢ່າງຄື:

- ໃນປີ ຄ.ສ. 1807 ໄດ້ທົງສ້າງພຣະຣາຊວັງຂຶ້ນ ໃນພຣະນະຄອນວຽງຈັນ.
- ໃນປີ ຄ.ສ. 1808 ໄດ້ສເດັດໄປສລອງຂົວ ຢູ່ທາດພະນົມ.
- ໃນປີ ຄ.ສ. 1808 ໄດ້ສ້າງວັດສີບຸນເຮືອງຂຶ້ນ ທີ່ໜອງຄາຍ.

ສ ພົງສາວະດານ ເຈົ້າອະນຸວຽງຈັນ

- ໃນປີ ຄ.ສ. 1812 ໄປສລອງ ວັດທາດພະນົມ ກັບມາແລ້ວ ໄດ້ຈັດການສ້າງຂົວຂ້າມແມ່ນ້ຳຂອງ ຢູ່ທ່າວັດຊ້າງເຜືອກ ( ອຳເພີສີຊຽງໃໝ່ ຈັງຫວັດໜອງຄາຍທຸກວັນນີ້ ).
- ໃນປີ ຄ.ສ. 1816 ໄດ້ທຳບຸນສລອງຫໍພຣະແກ້ວ ແລະ ຫໍໄຕ ( ແຈວັດສີສະເກດ ຟາກທາງກັບ ກະຊວງສຶກສາທິການ ).
- ໃນປີ ຄ.ສ. 1818 ໄດ້ສເດັດໄປປາບກະບົດພຣະສາເກດໂງ້ງ ເມືອງຈຳປາສັກ.

ເຖິງປີ ຄ.ສ. 1822 ພຣະເຈົ້າອະນຸວົງສ໌ ຈຶ່ງຂໍຕັ້ງເຈົ້າຣາຊບຸດໂຍ້ ພຣະຣາຊບຸດຂອງພຣະອົງ ໃຫ້ເປັນເຈົ້ານະຄອນຈຳປາສັກແທນເຈົ້າໝານ້ອຍ ທີ່ໄປສິ້ນພຣະຊົນທີ່ກຸງເທບ ແລະຕັ້ງເຈົ້າຄຳປ້ອງ (ຜູ່ເປັນຫລານ) ໃຫ້ເປັນອຸປຣາດ. ເຈົ້າຣາຊບຸດໂຍ້ ເມື່ອໄດ້ເປັນເຈົ້ານະຄອນຈຳປາສັກແລ້ວ ກໍໄດ້ລົງມືສ້າງແປງບ້ານເມືອງ ຄື:

- ໄດ້ສ້າງກຳແພງເມືອງຈຳປາສັກ
- ໄດ້ຂຸດຄອງອ້ອມເມືອງ ແລະ ໄດ້ສ້າງກຳແພງວັງຂຶ້ນໃໝ່
- ໄດ້ສ້າງຫໍພຣະແກ້ວຂຶ້ນໃຫ້ເປັນທີ່ຖືນ້ຳ ແລະ ໄດ້ປ່ຽນວິທີເກັບສ່ວຍໃໝ່ ຈາກຣາສດອນ ທັງສ້າງເມືອງຄັນເກິງ ໃຫ້ເປັນປ້ອມກັນສັດຕູເປັນຕົ້ນ... *(ຈາກພົງສາວະດານລາວ ໂດຍມະຫາສີລາ ວີຣະວົງສ໌ ວິທຍາລັຍປະສົມຟ້າງຸ່ມ, ວຽງຈັນ 1973, ໜ້າ 143).*

ສົມເດັດພຣະເຈົ້າອະນຸວົງມີ ພຣະອັຄມະເຫສີທີ່ປາກົດຊື່ຢູ່ໃນພົງສາວະດານວຽງຈັນສບັບນີ້ ມີຄື:
- ເຈົ້າຍິງຄຳປ້ອງ ແລະ
- ເຈົ້າຍິງຄຳຈັນ.

ສົມເດັດພຣະເຈົ້າອະນຸວົງສ໌ ມີຣາຊໂອຣົດ ແລະຣາຊທິດາ ປາກົດຊື່ຢູ່ໃນພຣະຣາຊພົງສາວະດານກຸງຣັຕນະໂກສິນ ຣັຊການທີ 3 ໜ້າ 38 :

1. ເຈົ້າສຸດທິສານ (ເຈົ້າໂປ້)
2. ເຈົ້າຍິງຄຳແພງ
3. ເຈົ້າຣາຊວົງ (ເຈົ້າເຫງົ້າ ເອີ້ນທົ່ວໄປວ່າ ເຈົ້າຣາຊວົງ)
4. ເຈົ້າຣາຊບຸດ (ເຈົ້າໂຍ້)
5. ເຈົ້າຍິງຊຽງຄຳ

ເມື່ອເວລາພຣະເຈົ້າອະນຸວົງສ໌ ໜີໄປລີ້ໄພຢູ່ຊຽງຂວາງນັ້ນ ເຈົ້າຣາຊວົງ (ຫລືເຈົ້າເຫງົ້າ) ແລະພັລຍາຊື່ໝ່ອມບົວ ແລະນ້ອງສາວຂອງເຈົ້າຣາຊວົງ ຄືເຈົ້າຍິງຊຽງຄຳບໍ່ໄດ້ຕິດຕາມໄປຊຽງຂວາງນຳພຣະເຈົ້າອະນຸວົງສ໌.

ອີງຕາມພຣະຣາຊພົງສາວະດານກຸງຣັຕນະໂກສິນ ຣັຊການທີ 3 (ພ.ສ. 2367-2394) ສບັບເຈົ້າພຣະຍາທິພາກອນວົງສ໌ ໜ້າ 82-87 ) ' ເຈົ້າຣາຊວົງໄດ້ສູ້ຮົບກັບກອງທັພເຈົ້າພຣະຍາຣາຊສຸພາວະດີ. ຝ່າຍເຈົ້າພຣະຍາຣາຊສຸພາວະດີຮູ້ວ່າ ເຈົ້າຣາຊວົງຍົກທັບຕາມມາ ກໍຈັດກອງທັພອອກໄປສູ້ກັນ ທີ່ບົກຫວານ (ຢູ່ໃນ ຈັງຫວັດໜອງຄາຍ) ເມື່ອເດືອນ 11 ຂຶ້ນ 10 ຄ່ຳ (ກົງກັບວັນເສົາ ວັນທີ 18 ຕຸລາຄົມ 1828). ໄດ້ສູ້ຮົບກັນເຖິງຕະລຸມບອນ ເຈົ້າຣາຊວົງ ແທງຖືກເຈົ້າພຣະຍາຣາຊສຸພາວະດີເສື້ອຂາດ ສຽດລົງໄປແຕ່ເອິກຈົນເຖິງທ້ອງນ້ອຍ ບາດແຜນັ້ນບໍ່ເຖິງຕົວ ຂາດເປັນທາງລົງໄປ ເຈົ້າພຣະຍາຣາຊສຸພາວະດີລົ້ມລົງ ຫລວງພິພິທ ນ້ອງຊາຍເຈົ້າພຣະຍາຣາຊສຸພາວະດີ ແລ່ນເຂົ້າໄປຊ່ວຍ ເຈົ້າຣາຊວົງຟັນຫລວງພິພິທຕາຍ ແລ້ວຈະເຂົ້າຊ້ຳເຈົ້າພຣະຍາຣາຊສຸພາວະດີອີກ ບໍ່ພໍເທົ່າໃດ ກໍມີປືນ ຍິງໄປຖືກຫົວເຂົ່າເບື້ອງຂວາຂອງເຈົ້າຣາຊວົງ. ເຈົ້າຣາຊວົງກໍລົ້ມລົງ. ພວກບ່າວກໍເຂົ້າໃຈວ່ານາຍຕາຍ ຈຶ່ງໄດ້ເຂົ້າຍົກເອົານາຍຂຶ້ນຄານຫາມໜີໄປ...ຝ່າຍເຈົ້າພຣະຍາຣາຊສຸພາວະດີເມື່ອຟື້ນ ຂຶ້ນມາ ກໍເອົານິ້ວມືຄຳເບິ່ງບາດແຜ ເຫັນວ່າບໍ່ເຂົ້າໄປໃນທ້ອງ ກໍຮຽກເອົານ້ຳມັນຫວ້ານມາຢອດໃສ່ບາດແຜ ເອົາຜ້າພັນເຂົ້າໄວ້ ປ່ຽນເສື້ອໃໝ່ ແລ້ວກໍຂຶ້ນຄານຫາມ ໄລ່ຜູ້ຄົນຕາມເຈົ້າຣາຊວົງໄປໃນເວລານັ້ນຈົນກະທັ້ງ ເຖິງຝັ່ງແມ່ນ້ຳຂອງກໍບໍ່ທັນ... ກ່ຽວກັບເຈົ້າຣາຊວົງນັ້ນ ເຈົ້າພຣະຍາຣາຊສຸພາວະດີ ໃຫ້ຊັກຖາມເຈົ້າອະນຸກັບ ເຈົ້າຍິງຄຳແພງເອື້ອຍເຈົ້າຣາຊວົງ ໄດ້ຄວາມວ່າ ຖືກຫອກຖືກປືນເຈັບຫລາຍ ໄປທາງບົກນຳເຈົ້າອະນຸບໍ່ໄດ້ ໄປເຖິງ ທ່າຂ້າມຊ້າງ ໄດ້ເຮືອລຳນຶ່ງ ເຈົ້າຣາຊວົງກັບພັລຍາ ( ຄືໝ່ອມບົວ ) ກໍລົງເຮືອໃຫ້ບ່າວພາຍໄປ ວ່າຈະໄປຂຶ້ນທີ່ເມືອງມະຫາໄຊກອງແກ້ວ (ເມືອງມະຫາໄຊ ແຂວງຄຳມ່ວນໃນປັດຈຸບັນ). ເຈົ້າພຣະຍາຣາຊສຸພາວະດີກໍແຕ່ງນາຍທັພນາຍກອງ ອອກລັດ ສະກັດສືບເສາະຕິດຕາມເຈົ້າຣາຊວົງ ທາງບົກທາງເຮືອຫລາຍທາງ ກໍບໍ່ໄດ້ຄວາມແຕ່ປະການໃດ.'

ພົງສາວະດານກຸງຣັຕນະໂກສິນ ຣັຊການທີ 3 ສບັບເຈົ້າພຣະຍາທິພາກອນວົງສ໌ທີ່ກ່າວຂ້າງເທິງນີ້ ໜ້າ 88-89 ຍັງໄດ້ກ່າວເຖິງການທຳການປະຈານເຈົ້າອະນຸວົງສ໌ ມີບັນທຶກໄວ້ດັ່ງລຸ່ມນີ້:

> *'...ທຳເປັນກົງເຫຼັກໃຫຍ່ ສຳລັບໃສ່ເຈົ້າອະນຸ ມີຮົ້ວຕະລາງລ້ອມຮອບທັງ 4 ດ້ານ ມີກົງເຫຼັກນ້ອຍໆ ສຳລັບໃສ່ລູກຫລານພຣະຊາຍາເຈົ້າອະນຸເຖິງ 13 ກົງ ມີເຄື່ອງກັມມະກອນຄື: ຄົກ ສາກ ສຳລັບຕຳ ມີເບັດສຳລັບກ່ຽວແຂນ ມີໝໍ້ສຳລັບຕົ້ມ ມີຂວານສຳລັບຜ່າໜ້າເອິກ ມີເລື່ອຍສຳລັບເລື່ອຍ ໄວ້ຄົບທຸກສິ່ງ ແລ້ວຕັ້ງຂາຍາງສິບສຽບເປັນເວລາ. ເວລາເຊົ້າ ໄຂເອົາເຈົ້າອະນຸ ກັບເຈົ້າໂປ້ເຈົ້າຄອງຈຳປາສັກ ເຈົ້າໂປ້ສຸດທິສານ ເຈົ້າແຕ້ ເຈົ້າປານ ເຈົ້າດວງຈັນ ເຈົ້າສຸວັນນະຈັກ ລູກເຈົ້າອະນຸ 7 ຄົນ ເຈົ້າຄຳປ້ອງ ພຣະຊາຍາເຈົ້າອະນຸ ເຈົ້າສຸຣິຍະ ເຈົ້າໂງ່ນຄຳໃຫຍ່ ເຈົ້າປານ ເຈົ້າຄຳບຸ ເຈົ້າດີ ຫລານເຈົ້າອະນຸ 5 ຄົນ ລວມ 14 ຄົນ ອອກມາຂັງໄວ້ໃນກົງ ໃຫ້ເມັຍນ້ອຍແຕ່ງຕົວ ຖືກະໂຖກໃສ່ເຂົ້າ ພ້ອມດ້ວຍເຄື່ອງກິນໄປລ້ຽງກັນ ຢູ່ໃນ*

*ບ່ອນປະຈານ...'*

ການປະຈານ ທາງດ້ານຈິຕວິທຍານີ້ ເຮັດໃຫ້ຄົນລາວທີ່ໄທຍ໌ສຍາມໄດ້ກວາດລົງໄປຢູ່ພາກກາງ ຂອງໄທຍ໌ພາກຕາເວັນອອກສ່ຽງເໜືອ ແລະຄົນລາວລ້ານຊ້າງຝັ່ງຂວາແມ່ນ້ຳຂອງ ມີຄວາມກຽດຊັງ ຖິ້ມໂທດໃສ່ເຈົ້າອະນຸວົງສ໌ ວ່າເປັນຜູ່ກະບົດຕໍ່ໄທຍ໌ສຍາມ ຕາມທັສນະຂອງສັກດີນາໄທຍ໌ສຍາມ ແຕ່ວ່າຕາມທັສນະຂອງຄົນລາວທົ່ວໄປແລ້ວ ສົມເດັດພຣະເຈົ້າອະນຸວົງສ໌ ແມ່ນເປັນຜູ່ນຳທີ່ຍິ່ງໃຫຍ່ອົງນຶ່ງຂອງປວັດສາດລາວໃນຕົ້ນສະຕະວັດທີ 19.

ເຈົ້າພຣະຍາທິພາກອນວົງສ໌ ໜ້າ 93 ໄດ້ບັນທຶກການປະຈານພຣະເຈົ້າອະນຸວົງອີກວ່າ :

*'.....ຣາສດອນຊາຍຍິງ ທັງໃນກຸງເທບ ແລະນອກກຸງ ພາກັນມາເບິ່ງແໜ້ນອັດທຸກໆເວລາບໍ່ໄດ້ຂາດ ຜູ້ທີ່ລູກຜົວຍາຕພີ່ນ້ອງທີ່ຖືກເກນໄປເລວເສິກຕາຍໄປແລ້ວກໍມານັ່ງປ້ອຍດ່າສາບແຊ່ງ ຢູ່ທຸກວັນ. ເມື່ອເວລາບ່າຍແດດອ່ອນແລ້ວ ກໍເອົາລູກຫລານທີ່ຈັບໄດ້ມາໃສ່ຊີກຍ່າງເປັນແຖວກັນ ຮ້ອງປະຈານໂທດ ໄດ້ເວລາແລ້ວກໍເອົາເຂົ້າໄປໄວ້ໃນບ່ອນຄຸມຂັງຄືເກົ່າ. ການປະຈານເຮັດຢູ່ໄດ້ 7 ວັນ 8 ວັນ ເຈົ້າອະນຸປ່ວຍເປັນໂຣກໂລຫິດເປື່ອຍກໍຕາຍ ໂປຼດໃຫ້ເອົາສົພໄປສຽບປະຈານໄວ້ທີ່ <u>ສຳເຫຼ່.</u> ເຈົ້າອະນຸເກີດເມື່ອປີກຸນນົພສົກ ຄ.ສ. 1767 ...'*

ນອກນີ້ ເພື່ອເປັນການປະຈານຕໍ່ການເສັຍສິງຄາມກູ້ເອກຣາດຂອງກອງທັບເຈົ້າອະນຸວົງສ໌ ວ່າເປັນຍ້ອນ ສຸລາ ແລະ ນາຣີ ໄທຍ໌ຍັງໄດ້ສ້າງອະນຸສາວະຣີ ' ຄຸນຍິງໂມ ຫລື ທ້າວສຸລານາຣີ ' ຂຶ້ນຢູ່ທີ່ໂຄຣາດ ຫລື ນະຄອນຣາຊສີມາ. ນາງໂມນີ້ ເປັນລູກສາວຂອງຫລວງນາ ຂ້າຣາຊການສຳຄັນຜູ່ນຶ່ງໃນເມືອງໂຄຣາດ ທີ່ໄດ້ມີບົດບາດໃນການໂຮມກຳລັງຂອງໄທຄົວທີ່ຖືກກວາດຄືນເມືອວຽງຈັນ ລຸກຮືຂຶ້ນ ໂດຍວ່ານາງໂມເອງກໍໄດ້ຖືກແຕ່ງຈາກພຣະຍາພົມພັກດີ (ຍົກກະບັດ) ເຈົ້າເມືອງນະຄອນຣາຊສີມາ ໃຫ້ໄປເປັນນາງບຳເລີ... *( ອີງຕາມບົດຄວາມ <u>ລວມນະວະນິຍາຍເລື້ອງສັ້ນ</u> ຂອງພົນຕຼີຫລວງວິຈິດວັທການ ຫວານໃຈເຈົ້າອະນຸ ສຳນັກພິມສເລີມວິທບັນນາການ 222 ເວັ້ງນະຄອນກະເສມ ພ.ສ. 2509).*

ໃນປະມານປີ 1969 ຢູ່ກາງສນາມຫລວງຂ້າງວັດພຣະແກ້ວ ໃນນະຄອນກຸງເທບ ໄດ້ມີການຫລິ້ນ ລະຄອນ ' ປາບອ້າຍອະນຸ ' ໃຫ້ມວນຊົນເບິ່ງ. ນັກສະແດງກໍໄດ້ເອົາພາບພົດດັ່ງກ່າວຂ້າງເທິງນີ້ ມາສະແດງມີຂັ້ນຕົບຕີ ທໍຣະມານ. ໃນເວລາການຫລິ້ນລະຄອນນັ້ນ ບັງເອີນມີນັກການທູດລາວຄົນນຶ່ງ ປະຈຳສະຖານທູດລາວທີ່ບາງກອກ ໄດ້ໄປເຫັນກັບຕາ ຈຶ່ງໄດ້ທຳການປະນາມເປັນທາງການ ຕໍ່ກະຊວງການຕ່າງປະເທດຂອງ

ໄທຍ໌ ບໍ່ຄວນມີການດູໝິ່ນປມາດວິຣະກະສັດລາວ ເປັນການແຕະຕ້ອງຕໍ່ສາຍສັມພັນ ລະຫວ່າງ ສອງປະເທດເພື່ອນບ້ານ.

ອີງຕາມພົງສາວະດານວຽງຈັນສບັບນີ້ ໜ້າ 106 ບັນທັດທີ 2 ວ່າ, ຫລັງຈາກທີ່ເຈົ້ານ້ອຍເມືອງພວນ ( ຮ່ວມກັບພຣະລັບ ແລະນາຍໝານຂັຕຕິຍະເມືອງນ່ານ, ທ້າວມະຫາພົມເມືອງຫລວງພຣະບາງ-ພຣະຣາຊພົງສາວະດານຣັຊການທີ່ 3 ໜ້າ 78 ) ຈັບເຈົ້າອະນຸວົງສ໌ພ້ອມດ້ວຍຄອບຄົວສົ່ງໃຫ້ໄທຍ໌ແລ້ວ ພຣະອົງໄດ້ຖືກນຳລົງໄປບາງກອກ, ບໍ່ໄດ້ກ່າວເຖິງການປະຈານ ການທໍຣະມານ ຢ່າງໂຫດຫ້ຽມຂອງໄທຍ໌ສຍາມ ເໝືອນດັ່ງທີ່ກ່າວມາ:

| | | |
|---|---|---|
| ເຂົາກໍ | ງັນຄາບເຈົ້າ | ບໍຣະບວນແລ້ວຈູດ |
| | ໄຟໃສ່ຂົ້ນ | ປະນົມແກ້ວມຸ່ນລົງ |
| ຝູງໝູ່ | ສັງໂຄເຈົ້າ | ຍວງບຸນບິນບອກ |
| | ເທທອດນ້ຳ | ລົງແທ້ສິ່ງບຸນ |
| ໃຫ້ເຈົ້າ | ເມືອສູ່ສ້າງ | ເມືອງສວັນສນຸກຍິ່ງ ຈິງເທີ້ນ |
| ໂລກນີ້ | ບໍ່ທ່ຽງແທ້ | ຢ່າໄດ້ທ່ອງທຽວ ພຣະເອີຍ |
| | ສຸຂທຸກນັ້ນ | ໃຜບໍ່ສ່ອງຕາເຫັນ ແທ້ແລ້ວ |
| ເປັນດັ່ງ | ກົງກວຽນຜັນ | ປີ່ນວຽນເລີງເລື້ອຍ |

ທ່ານຜູ່ແຕ່ງໄດ້ເວົ້າແຕ່ຄວາມຈິບງາມ ອາດເປັນຍ້ອນຄວາມອິດູສົງສານ ຈຶ່ງເວົ້າແຕ່ຄວາມດີ ເປັນການວິງວອນ ໃຫ້ດວງວິນຍານຂອງພຣະເຈົ້າອະນຸວົງສ໌ ວິຣະກະສັດລາວຜູ່ຍິ່ງໃຫຍ່ ໄປເຖິງທີ່ສຸຂຕລອດໄປ./.

# ວັນທີທີ່ສຳຄັນ ແລະ ເຫດການທີ່ພົວພັນເຖິງ ການກູ້ເອກຣາດ ຂອງພຣະເຈົ້າອະນຸວົງສ໌ ອອກຈາກແອກ ຂອງໄທຍ໌ສຍາມ

1707 ປະເທດລາວແບ່ງອອກເປັນ ສອງ ອານາຈັກຄື: ອານາຈັກລ້ານຊ້າງຫລວງພຣະບາງ ແລະອານາຈັກວຽງຈັນ.

1713 ນະຄອນຈຳປາສັກແຍກອອກໄປເປັນອານາຈັກນຶ່ງຕ່າງຫາກ ຈາກອານາຈັກວຽງຈັນ.

1766 ພຣະວໍຣະຣາດວົງສາ ເສນາບໍດີຜູ້ໃຫຍ່ຢູ່ໃນນະຄອນວຽງຈັນ ບໍ່ພໍໃຈກັບພຣະເຈົ້າສິຣິບຸນຍະສານ ດ້ວຍສາເຫດໃດບໍ່ແຈ້ງ ໄດ້ອົພຍົບຄອບຄົວ ແລະ ບ່າວໄພ່ຂອງຕົນຈາກວຽງຈັນ ລົງໄປຕັ້ງຢູ່ໜອງບົວລຸ່ມພູ (ຈັງຫວັດອຸດອນໃນປັດຈຸບັນ) ຕັ້ງບ້ານໜອງບົວຂຶ້ນເປັນເມືອງເອີ້ນວ່າ ເມືອງເຂື່ອນຂັນກາບແກ້ວໜອງບົວບານ, ປະກາດຕົນເປັນ ອິສຣະ ບໍ່ຂຶ້ນກັບວຽງຈັນ. ເມືອງໜອງບົວລຸ່ມພູຖືກທະຫານ ເມືອງນະຄອນຣາຊສີມາແລະວຽງຈັນຕີຂນາບ, ພຣະວໍຣະຣາດຈຶ່ງພາຄອບຄົວລົງໄປຕັ້ງ ຢູ່ບ້ານດອນມົດແດງ(ຈັງຫວັດອຸບົນທຸກວັນນີ້) ແລ້ວເຂົ້າໄປສມັກຢູ່ໃຕ້ຄວາມປົກຄອງ ຂອງພຣະເຈົ້າໄຊຍະກຸມມານ ເຈົ້ານະຄອນຈຳປາສັກ.

1767 ພຣະຍາຕາກສິນ ປະກາດຕົນເອງເປັນເຈົ້າແຜ່ນດິນສຍາມ ແລະຕັ້ງເມືອງເອກຢູ່ທົນບຸຣີ.

1770 ພຣະເຈົ້າສິຣິບຸນຍະສານ ສົ່ງພຣະຣາຊສານໄປຜູກສັມພັນທະໄມຕຼີກັບພຣະເຈົ້າຕາກສິນ ພຣະເຈົ້າແຜ່ນດິນໄທຍ໌ສຍາມ.

1774 ພຣະຍາຕາກສິນຍົກທັບໄປຕີຊຽງໃໝ່.

12/03/1775 ພຣະເຈົ້າສິຣິບຸນຍະສານປະທ້ວງຕໍ່ເຈົ້າຕາກສິນໃນການປະຕິບັດສັນຍາ ລາວລ້ານຊ້າງ-ສຍາມ (1771) ທີ່ຫາວ່າລາວໄປຮ່ວມມືກັບພະມ້າ.

31/05/1775 ພຣະເຈົ້າຕາກສິນ ຕອບຈົດໝາຍຂອງພຣະເຈົ້າສິຣິບຸນຍະສານ ໃນລັກສະນະ ຫາຍຄວາມສົງໃສ ໄທຍ໌ສຍາມຍັງເປັນມິຕທີ່ດີກັບລາວຄືເກົ່າ.

1776 ອານາຈັກຫລວງພຣະບາງທຳສັນຍາກັບສຍາມ.

1777 ພຣະວໍ ແລະ ເຈົ້າໄຊຍະກຸມມານແຫ່ງນະຄອນຈຳປາສັກ ເກີດມີການວິວາດກັນ ໄປຂຶ້ນກັບນະຄອນຣາຊສີມາ ແລ້ວກາຍໄປເປັນເມືອງສ່ວຍຂອງໄທຍ໌ສຍາມ

1777 ເມື່ອຊາບວ່າ ພຣະວໍ ແລະເຈົ້າໄຊຍະກຸມມານເກີດມີການວິວາດກັນ ເຈົ້າສິຣິບຸນຍະສານ ກໍສົ່ງກຳລັງໄປຄອນມົດແດງ (ອຸບົນ). ພຣະວໍຂໍຮ້ອງການຊ່ອຍເຫຼືອຈາກຈຳປາສັກ ແລະ ນະຄອນຣາຊສີມາທີ່ມາບໍ່ທັນ ພຣະວໍເລີຍຖືກຈັບ ແລະ ຖືກປະຫານຊີວິດໂດຍ ກອງທະຫານຈາກວຽງຈັນ. ລູກພຣະວໍ ທ້າວຄຳ ຫລົບໜີໄດ້ ກໍໄດ້ຂໍໃຫ້ນະຄອນ ຣາຊສີມາຊ່ອຍແກ້ແຄ້ນ ວຽງຈັນຄືນ.

1778 (ເດືອນ ພຶສພາ ແລະ ເດືອນ ທັນວາ) ໄທຍ໌ສຍາມເຂົ້າຕີ ແລະ ຈູດເຜົາເມືອງວຽງຈັນ ເປັນ ຄັ້ງທຳອິດ. ນາຍພົນຈັກກຼີນຳກອງກຳລັງ 20.000 ຄົນ ສູ່ວຽງຈັນ. ສ່ວນນ້ອງຊາຍ ຂອງນາຍພົນຈັກກຼີ, ນາຍພົນສຸຣາສີ ລົງໄປທາງຂເມນນຳກຳລັງທາງນ້ຳ 10.000 ຄົນ ຂຶ້ນມາທາງແມ່ນ້ຳຂອງໂດຍຍຶດເອົາຈຳປາສັກ, ນະຄອນພະນົມ ຈົນເຖິງໜອງຄາຍ ເມືອງຕ່າງໆ ທີ່ຂຶ້ນກັບວຽງຈັນ. ພ້ອມກັນນັ້ນໄທຍ໌ສຍາມ ໄດ້ຂໍໃຫ້ຫລວງພຣະບາງ ສົ່ງ ກຳລັງ (3.000 ຄົນ) ມາຕີວຽງຈັນທາງດ້ານເໜືອ. ໃນການຈູດເຜົາເມືອງວຽງຈັນ ໃນຄັ້ງນີ້ ໄທຍ໌ສຍາມໄດ້ເອົາ ພຣະແກ້ວມໍຣະກົດ, ພຣະບາງ, ພຣະພຸທຮູບສັກສິດຫລາຍ ອົງ(ເບິ່ງບັນຊີໜ້າ 177 )ຈຳນວນຄອບຄົວລາວ, ລູກເຈົ້າສິຣິບຸນຍະສານຄື: ເຈົ້ານັນ ທະເສນ, ເຈົ້າອະນຸວົງສ໌, ນາງແກ້ວຍອດຟ້າກັລຍານີ ເປັນຕົວປະກັນ ລົງໄປ ບາງກອກ.

- ພຣະເຈົ້າສິຣິບຸນຍະສານໄປລີ້ໄພຢູ່ເມືອງມະຫາໄຊກອງແກ້ວ (ແຂວງຄຳມ່ວນ) ຕິດຕາມ ດ້ວຍເຈົ້າອິນທະວົງ, ເຈົ້າພົມມະວົງ ແລະ ຄົນສນິດ.

1779 (ເດືອນເມສາ) ກອງທັບໄທຍ໌ສຍາມຖອນອອກຈາກວຽງຈັນ ປະໃຫ້ພຣະຍາສຸໂພ ນາຍທະຫານ ລາວ ເປັນຜູ້ປົກຄອງ.

1781 ພຣະເຈົ້າສິຣິບຸນຍະສານກັບຄືນມາປົກຄອງວຽງຈັນອີກ ແລະກໍສິ້ນພຣະຊົນໃນປີດຽວ ກັນນັ້ນ.

1781-1795 ເຈົ້າກຸງບາງກອກ ຄືຣັຊການທີ 1 ໄດ້ແຕ່ງໃຫ້ເຈົ້ານັນທະເສນ ໂອຣົດອົງທີນຶ່ງຂອງເຈົ້າ ສິຣິບຸນຍະສານຂຶ້ນເປັນພຣະເຈົ້າແຜ່ນດິນວຽງຈັນ. ພ້ອມດຽວກັນນັ້ນ ກໍໃຫ້ເອົາພຣະບາງ ມາສະຖິດຢູ່ນະຄອນວຽງຈັນຄືນ.

1782 ພຣະເຈົ້າຕາກສິນເປັນໂຣຄປະສາດ ຖືກປະຫານຊີວິດ ແລ້ວເຈົ້າພຣະຍາຈັກກຼີ ຂຶ້ນເປັນ ພຣະເຈົ້າແຜ່ນດິນສຍາມ ທົງພຣະນາມວ່າ ເຈົ້າພຣະຍາມະຫາກະສັດສຶກ ຫລື ຣັຊການທີ 1. ລະຍະນີ້ ໄດ້ເອົາກຸງເທບ ເປັນມະຫານະຄອນ.

ທ ພົງສາວະດານ ເຈົ້າອະນຸວຽງຈັນ

1795 ເຈົ້ານັນທະເສນຖືກຣຽກລົງໄປບາງກອກ, ຖືກກ່າວຫາວ່າ ຮ່ວມມືກັບເຈົ້າເມືອງ
ນະຄອນພະນົມ ຂໍກູ້ເອກຣາດຈາກໄທຍ໌ສຍາມ ເລີຍສິ້ນພຣະຊົນຢູ່ທີ່ນັ້ນ.

1795-1804 ເຈົ້າອິນທະວົງ ຖືກແຕ່ງຕັ້ງຂຶ້ນເປັນເຈົ້າແຜ່ນດິນວຽງຈັນ ແລ້ວໃຫ້ເຈົ້າອະນຸວົງສ໌ຂຶ້ນມາ
ເປັນ ເຈົ້າອຸປະຣາດ. ເຈົ້າອະນຸໄດ້ເປັນຜູ້ບັນຊາກອງທັບລາວ ທີ່ມີຄວາມປີຊາສາມາດ
ສູ້ກັບພະມ້າ ໃນປີ 1795, 1798, 1799 ແລະ 1803 ຊຶ່ງມີ ສອງຄັ້ງຮ່ວມຣົບກັບ
ຣັຊການທີ 1.

1804 ເຈົ້າອິນທະວົງສິ້ນພຣະຊົນຢູ່ນະຄອນຫລວງວຽງຈັນ

1804-1827 ພຣະເຈົ້າອະນຸວົງສ໌ ຂຶ້ນເປັນເຈົ້າແຜ່ນດິນວຽງຈັນ

1805 ພຣະເຈົ້າອະນຸວົງສ໌ ໄດ້ຍົກທັບໄປຕີນະຄອນຊຽງຕຸງ, ຊຽງຮຸ່ງ ຕລອດເມືອງລື້ທັງຫລາຍ
ຊ່ອຍກອງທັບໄທຍ໌

1806 ພຣະເຈົ້າອະນຸວົງສ໌ໄດ້ສ້າງພຣະຣາຊວັງ, ຫໍໂຮງຂຶ້ນໃນນະຄອນວຽງຈັນ

1808 ພຣະເຈົ້າອະນຸວົງສ໌ໄດ້ສເດັດໄປທຳບຸນສລອງຂົວວັດທາດພະນົມ ແລະສ້າງວັດສີບຸນເຮືອງ
ຂຶ້ນ ໃນເມືອງໜອງຄາຍ

1809 ຣັຊການທີ 2 ຄືພຣະເລີດຫລ້ານະພາໄລ ຂຶ້ນເປັນພຣະເຈົ້າແຜ່ນດິນໄທຍ໌ສຍາມ

1809 ພຣະເລີດຫລ້ານະພາໄລ ເຈົ້າແຜ່ນດິນໄທຍ໌ ໄດ້ສົ່ງໃຫ້ເຈົ້າພຣະຍາຈັກກຣີ ຂຽນຈົດໝາຍ
ຝາກຄວາມຮັກຄວາມແພງຫາພຣະເຈົ້າອະນຸວົງສ໌

1810 ພຣະເຈົ້າອະນຸວົງສ໌ໄດ້ສ້າງຫໍພຣະແກ້ວຂຶ້ນທີ່ວັດຊ້າງເຜືອກ ບ້ານສີຊຽງໃໝ່ ແລະສ້າງ
ຂົວຂ້າມນ້ຳຂອງຂຶ້ນ ທີ່ຊື່ວັດຊ້າງເຜືອກ ມາໃສ່ຊື່ວັດອຸບມຸງວຽງຈັນ

1813 ພຣະເຈົ້າອະນຸວົງສ໌ສເດັດໄປໄຫວ້ພຣະທາດພະນົມ ແລະ ທຳບຸນສລອງຫໍພຣະແກ້ວ
ໃນນະຄອນວຽງຈັນ, ໄດ້ທານຜ້າຈີວອນ 7.000 ຜືນ.

1818 ພຣະເຈົ້າອະນຸວົງສ໌ໄດ້ສ້າງວັດສະຕະສະຫັສສາຣາມ (ວັດແສນ) ຄືວັດສີສະເກດທຸກວັນນີ້
ຂຶ້ນທີ່ວຽງຈັນ ພ້ອມດ້ວຍພຣະພຸທຮູບອີກຫລວງຫລາຍ

1819 ພຣະເຈົ້າອະນຸວົງສ໌ ໄດ້ແຕ່ງໃຫ້ໝື່ນເຮືອຄຳ ເປັນທູດເອົາເຮືອຄຳໄປຖວາຍ
ພຣະເຈົ້າມັນທາຕຸຣາດ ເຈົ້ານະຄອນຫລວງພຣະບາງ ເພື່ອຜູກໄມຕຼີ ແລະປີລຸນມາ
ກໍໄດ້ສົ່ງຊ້າງຕົວນຶ່ງສູງ 7 ສອກ ໄປຖວາຍອີກ ເພື່ອປະສານຄວາມແຕກແຍກກັນ
ແຕ່ກ່ອນໆໃຫ້ດີຂຶ້ນ.

1819 ພະສາເກດໂງ້ງຂະບວນຜູ່ມີບຸນ, ເຜົານະຄອນຈຳປາສັກ

1822 ເຈົ້າຣາຊບຸດໂຍ້ ຖືກແຕ່ງຕັ້ງເປັນເຈົ້າຄອງນະຄອນຈຳປາສັກ

1824 ຣັຊການທີ 3 ຂຶ້ນເປັນພຣະເຈົ້າແຜ່ນດິນທົງພຣະນາມວ່າ ພຣະນັ່ງເກົ້າ

1825 ພຣະເຈົ້າອະນຸວົງສ໌ ແລະ ເຈົ້າມັນທາຕຸຣາດ ພຣະເຈົ້າແຜ່ນດິນຫລວງພຣະບາງ ກໍລົງໄປບາງກອກ ເພື່ອຊ່ອຍການພຣະບໍຣົມສົພຂອງຣັຊການທີ 2. ຫລັງຈາກພິທີປົງສົພ ສຳເລັດຮຽບຮ້ອຍແລ້ວ, ກຳລັງຂອງພຣະເຈົ້າອະນຸວົງສ໌ທີ່ໄປຮ່ວມພິທີນັ້ນ ໄດ້ຖືກເກນໃຫ້ຕັດແລະຂົນຕົ້ນຕານທີ່ເມືອງສຸພັນບຸຣີ ແລ້ວແກໄປໄວ້ເມືອງສມຸດປາການ. ພຣະເຈົ້າອະນຸວົງສ໌ ກໍໄດ້ແຕ່ງໃຫ້ເຈົ້າຣາຊວົງນຳພາໄພ່ພົນໄປເຣັດ. ເມື່ອໝົດລະດູຝົນແລ້ວ ພຣະເຈົ້າອະນຸວົງສ໌ຈະກັບຄືນນະຄອນວຽງຈັນ ຈຶ່ງຂໍເອົານັກຟ້ອນ, ເຈົ້າຍິງດວງຄຳ ແລະຊາວລາວຢູ່ສາຣະບຸຣີທີ່ຖືກກວາດໄປ ແຕ່ວຽງຈັນ (1778-1779)ປະມານ 10. 000 ຄົນ ໄດ້ກັບຄືນວຽງຈັນ. ຄຳຂໍຖືກປະຕິເສດ. ອັນເປັນສ່ວນນຶ່ງຂອງຕົ້ນເຫດ ທີ່ພາໃຫ້ພຣະເຈົ້າອະນຸວົງສ໌ມີຄວາມຄຽດແຄ້ນ, ເລີ້ມການວາງແຜນກອບກູ້ເອົາເອກຣາດ ອອກຈາກແອກຂອງໄທຍ໌ສຍາມ. ເມື່ອເຖິງນະຄອນວຽງຈັນແລ້ວ ພຣະເຈົ້າອະນຸວົງສ໌ ກໍໄດ້ຮຽກປະຊຸມດ່ວນໂດຍໃຫ້ເຫດຜົນວ່າ: ຣັຊການທີ 3 ຍັງບໍ່ທັນມີຄວາມຊຳນິຊຳນານ, ກອງທັບໄທຍ໌ສຍາມບໍ່ເຂັ້ມແຂງ, ເຈົ້າເມືອງນະຄອນຣາຊສີມາ ທີ່ເປັນດ່ານຂັດຂວາງ ການຜ່ານເຂົ້າຕີບາງກອກນັ້ນ ບໍ່ຢູ່. ເຫດຜົນທີ່ສຳຄັນແມ່ນ ມີຂ່າວວ່າ ອັງກິດສົ່ງເຮືອຮົບເຂົ້າມາບຂູ່ບາງກອກ. ພຣະເຈົ້າອະນຸວົງສ໌ ໃຫ້ທັດສະນະວ່າ ການສົ່ງກອງທັບລາວລົງໄປບາງກອກໂດຍຜ່ານພາກອີສານ ອ້າງວ່າໄປສົມທົບຊ່ອຍບາງກອກໃນການສູ້ກັບອັງກິດ

*( ອີງຕາມເອກສານຂອງ **David Wyatt** ໜ້າ 30 )*

14/2/1827 ກອງທັບໜ້າຂອງເຈົ້າອະນຸວົງສ໌ເຄື່ອນມາເຖິງນະຄອນຣາຊສີມາ ໂດຍບໍ່ມີການກີດຂວາງ ຫຼັງເຣັດໃຫ້ທາງບາງກອກຕົກຕື່ນຕົກໃຈ. ອາທິດຕໍ່ມາກອງທະຫານດັ່ງກ່າວກໍເຖິງສາຣະບຸຣີ, ຍ່າງອີກ 3 ວັນກໍເຖິງບາງກອກ. ກອງທັບຝ່າຍຊ້າຍຂອງເຈົ້າຣາຊໂຍ້ ເຈົ້ານະຄອນຈຳປາສັກ ກໍຂຶ້ນມາສົມທົບ ເຖິງນະຄອນຣາຊສີມາ.

17/2/1827 ກອງທັບຫລວງບັນຊາໂດຍເຈົ້າອະນຸວົງສ໌ເອງ ແລະເຈົ້າສຸດທິສານ ເຖິງນະຄອນຣາຊສີມາ ມີຈຳນວນພົນ 80.000 ຄົນ ຕັ້ງຄ້າຍ 7 ບ່ອນ ຢູ່ນອກນະຄອນຣາຊສີມາ.

03/03/1827 ເຈົ້າອຸປຣາດຂອງຣັຊການທີ 3 ຖືກສົ່ງໄປທ່າເຮືອໃຕ້ສະຣະບຸຣີ ເພື່ອສືບສວນເບິ່ງການຄືບໜ້າຂອງກອງທັບເຈົ້າອະນຸວົງສ໌.

23/03/1827 ພຣະເຈົ້າອະນຸວົງສ໌ ຖອຍທັບໄປຕັ້ງຢູ່ໜອງບົວລຸ່ມພູ

01/04/1827 ກອງທັບຫລວງຂອງໄທຍ໌ ມີ 5 ທັບ ໄດ້ຍົກເຂົ້າມາຕີຄ້າຍໜອງບົວລຸ່ມພູ ບັນຊາໂດຍພຣະຍາມາຣົນ

ມ ພົງສາວະດານ ເຈົ້າອະນຸວຽງຈັນ

04/05/1827 ຄ້າຍໜອງບົວລຸ່ມພູ ແຕກ. ພຣະຍານະຣິນຖືກຈັບ. ບໍ່ຍອມອ່ອນນ້ອມ ບອກວ່າ ເປັນ
ຊາດທະຫານ ຖ້າເສັຽທີແລ້ວຕ້ອງຕາຍ. ເຈົ້າແມ່ທັບໄທຍ໌ຈຶ່ງໃຫ້ເອົາຊ້າງແທງເສັຽ.

13/05/1827 ກອງທັບພຣະຍາຊຽງສາ ຖອຍມາຕັ້ງຢູ່ບ້ານໂພນຊຽງຫວາງ ແຄມຫ້ວຍຫລວງ
ເມືອງໂພນພິໄສ

16/05/1827 ເມື່ອກອງທັບລາວທີ່ຕັ້ງຢູ່ຊ່ອງພູເຂົ້າສານແຕກແລ້ວ ພຣະເຈົ້າອະນຸວົງສ໌ ກໍພາພຣະຣາຊ
ໂອຣົດ ພຣະຣາຊທິດາ ແລະພຣະມະເຫສີຂີ່ເຮືອລ່ອງໄປຂຶ້ນເມືອງມະຫາໄຊກອງແກ້ວ
ແລ້ວໄປພັກເຊົາຢູ່ເມືອງແງອານໃນປະເທດແກວ.

ເດືອນ 5/1827 ກອງທັບໄທຍ໌ສຍາມເຂົ້າວຽງຈັນ

ເດືອນ ກຸມພາ 1828 ຣັຊການທີ 3 ບໍ່ພໍພຣະທັຍທີ່ວຽງຈັນບໍ່ຖືກເຜົາໝົດ ສັ່ງໃຫ້ເຈົ້າພຣະຍາ
ຣາຊສຸພາວະດີຈູດວຽງຈັນອີກ ໃຫ້ໝົດກ້ຽງ

02/08/1828 ພຣະເຈົ້າອະນວົງສ໌ ເຈົ້າຣາຊວົງ ຍຶດວຽງຈັນຄືນ
ເຈົ້າຣາຊວົງເຫງົ້າເລວດາບກັບເຈົ້າພຣະຍາຣາຊສຸພາວະດີຢູ່ ບົກຫວານ ເມືອງໜອງຄາຍ

19/10/1828 ພຣະເຈົ້າອະນຸວົງຖອຍ ໄປລີ້ໄພຢູ່ຊຽງຂວາງ

15/01/1829 ພຣະເຈົ້າອະນຸວົງສ໌ ຖືກຈັບລົງໄປບາງກອກ

ເດືອນ ມົກກະຣາ 1829 ພຣະເຈົ້າອະນວົງສິ້ນພຣະຊົນ

27/6/29 ຈົດໝາຍຂອງພຣະເຈົ້າຈັກກະພັດມິງມັງ ເຖິງຣັຊການທີ 3 ຂໍໃຫ້ໄທຍ໌ຮ່ວມອານາມ
ຕັ້ງເຈົ້າຄອງວຽງຈັນຄືນ.

24/VII
ຫ້າມຈຳໜ່າຍ

# ຊື່ບຸກຄົນໃນພົງສາວະດານສະບັບນີ້

**ລາວ**

1. ພຣະເຈົ້າອະນຸວົງສ໌ = ຣາຊໂອຣົດອົງທີ 3 ຂອງ ສົມເດັດພຣະເຈົ້າສິຣິບຸນຍະສານ, ຍັງມີນາມອີກວ່າ : ພຣະເຈົ້າອະນຸຣຸທຣາຊ ຫລື ພຣະເຈົ້າໄຊຍະເຊດຖາທິຣາຊ ທີ 3.
2. ເຈົ້າຍິງຄຳປ້ອງ = ມະເຫສີ ຝ່າຍຂວາ ຂອງພຣະເຈົ້າອະນຸວົງສ໌
3. ເຈົ້າຍິງຄຳຈັນ = ມະເຫສີ ຝ່າຍຊ້າຍ ຂອງພຣະເຈົ້າອະນຸວົງສ໌ *
4. ເຈົ້າຣາຊບຸດໂຍ້ = ຣາຊໂອຣົດອົງທີ 4 ຂອງພຣະເຈົ້າອະນຸວົງສ໌ ເປັນເຈົ້າຄອງນະຄອນຈຳປາສັກ
5. ວັງໜ້າ (ໜ້າ 62) = ແມ່ນເຈົ້າຣາຊວົງສ໌ ໂອຣົດຂອງພຣະເຈົ້າອະນຸວົງສ໌ ຍົກທັບຈາກເມືອງເລີຍ (ຈັງຫວັດເລີຍໃນປັດຈຸບັນນີ້) ໄປສົມທົບພຣະເຈົ້າອະນຸວົງສ໌ ທີ່ໂຄຣາດ ແລ້ວເຄື່ອນທັບໄປສະຣະບຸຣີ
6. ພຣະຍາໄກ = ເຈົ້າເມືອງໆຊູຮັນ, ຄຽດແຄ້ນຕໍ່ຍົກກະບັດ
7. ທ້າວກົງຫຼ້າ = ນ້ອງຊາຍພຣະຍາໄກ , ແມ່ທັບເຈົ້າເມືອຊູຮັນປອງຮ້າຮ້າຍຕົນເອງ ແລ້ວຈູດເມືອງຊູຮັນ, ໄປເຂົ້າກັບຍົກກະບັດ
8. ພຣະຍາສົມພະມິດ = ເຈົ້າເມືອງໆກາລະສິນ ທົນການນາບຂູ່ຂອງຍົກກະບັດບໍ່ໄດ້ ຈຶ່ງນຳຄົວໄປສ້າງເມືອງຂຶ້ນໃໝ່ທີ່ໜອງຫານ, ເມື່ອສ້າງເສັດແລ້ວໃຫ້ຊື່ວ່າ ສະກົລຄອນ ເມືອງພຣະທາດໆໃຫຍ່.
9. ຊານົນ = ແມ່ທັບ
10. ພຣະຍາຊຽງສາ = ແມ່ທັບ
11 ພຣະຍານະຣິນ = ແມ່ທັບ
12. ພຣະຍາສຸໂພ = ແມ່ທັບ
13. ເຈົ້າບຸນຈັນສີສູຣາດ = ແມ່ທັບ
12. ພຣະຍາເຜັດ = ແມ່ທັບ
13. ພຣະສາເກດໂງ້ງ = ພຣະເມືອງຈຳປາສັກ, ເປັນຜູ້ມີບຸນ ຖືກຍົກກະບັດວາງເລ່ກົນໃຫ້ເຜົາເມືອງຈຳປາສັກ
14. ເຈົ້າຈຸລນີ = ເຈົ້າເມືອງໆນະຄອນ
15. ເຈົ້ານ້ອຍເມືອງພວນ = ເຈົ້າເມືອງພວນ
16. ເຈົ້າຣາຊວົງສ໌ເຫງົ້າ = ໂອຣົດອົງທີ 3 ຂອງພຣະເຈົ້າອະນຸວົງສ໌

# ຂໍໂທດຫຼາຍໆ



ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ